# ບົດຂ່າວ

# ທຄຕລ ເປີດບູ໊ດໃຫ້ບໍລິການ ແລະ ຈັດກິດຈະກຳສົ່ງເສີມ ການນຳໃຊ້ One Pay

ນະຄອນຫຼວງວຽງຈັນ, ວັນທີ: 23/12/2017

ວັນທີ 16-25 ທັນວາ 2017, ຢູ່ທີ່ ສູນການຄ້າລາວ-ໄອເຕັກ(ຕຶກເກົ່າ) ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ເປີດບູ໊ດ ໃຫ້ບໍລິການ ແລະ ຈັດກິດຈະກຳສົ່ງເສີມການນຳໃຊ້ One Pay ຫຼື ການຊຳລະສິນຄ້າດ້ວຍການ ສະແກນ QR Code. ເຊິ່ງມີຮ້ານຄ້າຈຳນວນຫລາຍຮ້ານ ເຂົ້າຮ່ວມບໍລິການຮັບຊຳລະສິນຄ້າແບບໃໝ່ ຊື້ງ່າຍ-ຈ່າຍສະດວກ ຜ່ານ One Pay. ພາຍໃນງານ ທຄຕລ ຍັງໃຫ້ບໍລິການເປີດບັນຊີໃໝ່, ຝາກ-ຖອນ, ໂອນເງິນ, ສະໝັກຜະລິດຕະພັນບັດທຸກ ປະເພດ ພ້ອມທັງ ລົງທະບຽນສະໝັກ BCEL One ແລະ One Pay ເພື່ອຮັບເອົາ QR Code ສຳລັບຮ້ານຄ້າ.




One Pay ເປັນຜະລິດຕະພັນໃໝ່ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຊິ່ງເປັນ Function ໜຶ່ງ ທີ່ນອນຢູ່ໃນແອັບ BCEL One, ນຳໃຊ້ເພື່ອການຊຳລະຄ່າສິນຄ້າ ດ້ວຍການສະແກນ QR Code ສຳລັບຮ້ານຄ້າທີ່ໄດ້ ລົງທະບຽນນຳໃຊ້ ແລະ ລູກຄ້າຜູ້ທີ່ມີ BCEL One. ການຊຳລະສິນຄ້າແບບໃໝ່ ຜ່ານການສະແກນ QR Code ໄດ້ສ້າງ ຄວາມສົນໃຈໃຫ້ກັບສັງຄົມຈຳນວນຫລາຍ ເນື່ອງຈາກເປັນນະວັດຕະກຳການຊຳລະເງິນຮູບແບບໃໝ່ ທີ່ອຳນວຍຄວາມ ສະດວກໃຫ້ກັບຜູ້ຊົມໃຊ້ກໍ່ຄືຜູ້ຊື້ ແລະ ຜູ້ຂາຍຫຼາຍດ້ານ. ສຳລັບຜູ້ຂາຍແມ່ນຖືວ່າເປັນການເພີ່ມຊ່ອງທາງການຊຳລະເງິນໃຫ້ກັບ ລູກຄ້າ, ບໍ່ຫຍຸ້ງຍາກເງິນທອນ, ບໍ່ສິ້ນເປືອງເວລາ, ມີຄວາມປອດໄພ, ກວດສອບໄດ້, ຫຼີກລ່ຽງຄວາມສ່ຽງຕໍ່ກັບການຮັບເງິນ ປອມ ແລະ ເກັບມ້ຽນເງິນສົດ. ສຳລັບຜູ້ຊື້ແມ່ນເປັນການເພີ່ມຊ່ອງທາງໃນການຊຳລະເງິນຊື້ສິນຄ້າ, ສາມາດຫຼີກລ່ຽງຄວາມ ສ່ຽງໃນການຖືເງິນສົດ, ປະຢັດເວລາໃນການລໍຖ້າເງິນທອນ, ມີຄວາມປອດໄພ ແລະ ກວດສອບໄດ້.







ພາຍຫລັງທີ່ມີການຖະແຫລງເປີດການນຳໃຊ້ ຜະລິດຕະພັນ One Pay ຢ່າງເປັນທາງການ ໃນວັນທີ 30/11/2017 ຜ່ານມານີ້ ເຫັນວ່າຜະລິດຕະພັນດັ່ງກ່າວໄດ້ມີການຕອບຮັບຈາກສັງຄົມ ກໍ່ຄືຫ້າງຮ້ານ, ທຸລະກິດລາຍຍ່ອຍ ແລະ ລາຍໃຫຍ່ ເປັນຈຳນວນຫລວງຫລາຍ ເນື່ອງຈາກ ໄດ້ສ້າງຄວາມສະດວກສະບາຍໃຫ້ກັບຜູ້ຊົມໃຊ້. ເຊິ່ງປະຈຸບັນມີຮ້ານຄ້າທີ່ຮັບຊຳລະ ສິນຄ້າຜ່ານລະບົບ One Pay ພາຍໃນນະຄອນຫຼວງວຽງຈັນ ຫຼາຍກວ່າ **300 ຮ້ານ** ພາຍຫລັງເປີດການນຳໃຊ້ພຽງແຕ່ 3 ອາທິດ ແລະ ໃນມໍ່ໆນີ້ແມ່ນຈະຂະຫຍາຍໄປໃນຂອບເຂດທົ່ວປະເທດ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ ແລະ ນະໂຍບາຍຂອງພັກ-ລັດ ຫລຸດຜ່ອນການນຳໃຊ້ເງິນສົດຢູ່ໃນຂອດຈໍລະຈອນລະບົບເສດຖະກິດ. ຄຽງຄູ່ກັບຍຸກສະໄໝ ແຫ່ງການປ່ຽນແປງໃໝ່, ທຄຕລ ຈະພັດທະນາລະບົບໃຫ້ມີຄວາມທັນສະໄໝ ນຳໃຊ້ງ່າຍ ຊື້-ຂາຍສະດວກຂຶ້ນຕື່ມອີກດ້ວຍ.

**ຂ່າວໂດຍ: ຂະແໜງສົ່ງເສີມຜະລິດຕະພັນ ແລະ ການຕະຫຼາດ**


| | |
|---|---|
| **ສອບຖາມຂໍ້ມູນເພີ່ມເຕີມໂທ:** | **021 213200 ຕໍ່ 404/407** |
| **Facebook Fan Page:** | **BCEL Bank** |
| **Website:** | **www.bcel.com.la** |